ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມການສຶກສາຊັ້ນສູງ
ສະຖາບັນ ພາສາຕ່າງປະເທດໄລໂກສ

ເລກທີ: 622 /ສພລ.
ນະຄອນຫຼວງວຽງຈັນ, ວັນທີ: 09 JUL 2025

# ຂໍ້ກຳນົດ

**ວ່າດ້ວຍການປະເມີນຜົນການຮຽນ**
**ສຳລັບຫຼັກສູດອະນຸປະລິນຍາ, ປະລິນຍາຕີ ແລະ ປະລິນຍາຕີຕໍ່ເນື່ອງ (ສະບັບປັບປຸງ 2025)**

- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສະຖາບັນພາສາຕ່າງປະເທດໄລໂກສ ສະບັບເລກທີ 689/ສສກ ລົງວັນທີ 15 ກຸມພາ 2022.
- ອີງຕາມ: ບົດບັນທຶກກອງປະຊຸມສະພາວິຊາການ, ສພລ ສະບັບເລກທີ: /ສພລ, ລົງວັນທີ:

**ຜູ້ອຳນວຍການສະຖາບັນ ພາສາຕ່າງປະເທດໄລໂກສ ຈຶ່ງອອກຂໍ້ກຳນົດ:**

**ມາດຕາ 1. ຫຼັກການປະເມີນຜົນການຮຽນ** (The Principle of Assessment) ປັບປຸງ:

1.1 ໃນແຕ່ລະພາກຮຽນສະຖາບັນພາສາຕ່າງປະເທດໄລໂກສຈະຕ້ອງຈັດໃຫ້ມີການປະເມີນຜົນການຮຽນສະເພາະແຕ່ລະວິຊາທີ່ນັກສຶກສາໄດ້ລົງທະບຽນໄວ້ໃນພາກຮຽນນັ້ນຕາມການກຳນົດຄະແນນໃນວັກ 1.2 ຂອງມາດຕານີ້;

1.2 ຮູບການໃນການປະເມີນຜົນຂອງແຕ່ລະວິຊາແບ່ງອອກເປັນແຕ່ລະປະເພດດັ່ງນີ້:

| | |
|---|---|
| 1) ຄະແນນການຂຶ້ນຫ້ອງຮຽນ (Attendance Score): | 20 ຄະແນນ; |
| 2) ຄະແນນວຽກບ້ານ (Homework Score): | 10 ຄະແນນ; |
| 3) ຄະແນນການມີສ່ວນຮ່ວມ (Participation): | 10 ຄະແນນ; |
| 4) ຄະແນນຄຸນສົມບັດສຶກສາ (Marol Dimension): | 10 ຄະແນນ; |
| 5) ຄະແນນສອບເສັງກາງພາກ (Mid-Semester Exam Score): | 20 ຄະແນນ; |
| 6) ຄະແນນສອບເສັງທ້າຍພາກ (Final Exam Score): | 30 ຄະແນນ; |
| **ຄະແນນລວມ:** | **100 ຄະແນນ.** |

**ມາດຕາ 2. ການສົ່ງຄະແນນ ແລະ ການອອກໃບຢັ້ງຢືນຄະແນນ** (Grade Submission and Transcript Certificate) ປັບປຸງ:

2.1 ການສົ່ງຄະແນນປະຈຳພາກຮຽນພາຍຫຼັງຈັດຕັ້ງການສອບເສັງສຳເລັດແລ້ວ, ອາຈານຜູ້ສິດສອນຕ້ອງສົ່ງຄະແນນ ຫຼື ຜົນການສອບເສັງໃຫ້ພາກວິຊາທີ່ຕົນສັງກັດຕາມວັນ ແລະ ເວລາທີ່ໄດ້ກຳນົດໄວ້, ພາກວິຊາຕ້ອງສັງລວມ ແລະ ບັນທຶກຄະແນນດັ່ງກ່າວແລ້ວສົ່ງໃຫ້ພະແນກຄຸ້ມຄອງວິຊາການພາຍໃນກຳນົດເວລາ 10 ວັນ;



CS CamScanner

2.2 ການອອກໃບຢັ້ງຢືນຄະແນນຂອງນັກສຶກສາໃຫ້ປະຕິບັດດັ່ງນີ້:

ຖ້ານັກສຶກສາຕ້ອງການໃບຢັ້ງຢືນຜົນການຮຽນ(ໃບຄະແນນ) ເພື່ອປະກອບເອກະສານໃນການເຄື່ອນໄຫວວຽກງານ ຫຼື ກິດຈະກຳຕ່າງໆ, ເອກະສານດັ່ງກ່າວ ແມ່ນຜູ້ອຳນວຍການສະຖາບັນພາສາຕ່າງປະເທດໂລໂກສ ເປັນຜູ້ອະນຸມັດອອກໃຫ້.

**ມາດຕາ 3. ການປະເມີນຜົນການຮຽນ (Assessment Criteria) ປັບປຸງ:**

ການປະເມີນຜົນການຮຽນສຳລັບແຕ່ລະລາຍວິຊາຂອງນັກສຶກສາຈະຄິດໄລ່ຕາມເກນທີ່ກຳນົດໄວ້ດັ່ງນີ້:

| ລະດັບຄະແນນ | | | ຄວາມໝາຍ | | ຄ່າລະດັບ |
|---|---|---|---|---|---|
| ສັນຍະລັກ ພາສາລາວ | ສັນຍະລັກ ພາສາອັງກິດ | ຄະແນນ ສ່ວນຮ້ອຍ | ພາສາລາວ | ພາສາອັງກິດ | |
| ກ | A | 91-100 | ດີເລີດ | Excellent | 4.00 |
| ຂ+ | B+ | 81-90 | ດີຫຼາຍ | Very Good | 3.50 |
| ຂ | B | 70-80 | ດີ | Good | 3.00 |
| ຄ+ | C+ | 65-69 | ດີພໍໃຊ້ | Fairly Good | 2.50 |
| ຄ | C | 60-64 | ພໍໃຊ້ໄດ້ | Fair | 2.00 |
| ງ+ | D+ | 55-59 | ອ່ອນ | Poor | 1.50 |
| ງ | D | 50-54 | ອ່ອນຫຼາຍ | Very Poor | 1.00 |
| ຕ | F | 0-49 | ຕົກ | Fail | 0.00 |
| ບ | I | | ບໍ່ສົມບູນ | Incomplete | |

**ມາດຕາ 4. ການນຳໃຊ້ລະດັບ F ຕົກ ເພີ່ມເຕີມ (Using the 'F' grade) ປັບປຸງ:**

ນອກຈາກເກນການປະເມີນຜົນທີ່ໄດ້ກຳນົດໄວ້ໃນມາດຕາທີ 03 ແລ້ວ, ຍັງສາມາດນຳໃຊ້ໃນກໍລະນີດັ່ງຕໍ່ໄປນີ້:

4.1 ນັກສຶກສາທີ່ຜິດລະບຽບການສອບເສັງ ແລະ ໄດ້ຖືກພິຈາລະນາຕັດສິນໃຫ້ຕົກຕາມລະບຽບກ່ຽວກັບການສອບເສັງປະຈຳພາກຮຽນ ທີ່ສະຖາບັນພາສາຕ່າງປະເທດໂລໂກສ ໄດ້ກຳນົດໄວ້;

4.2 ຂາດການສອບເສັງໂດຍບໍ່ມີເຫດຜົນພຽງພໍ ແລະ ບໍ່ໄດ້ຮັບອະນຸຍາດຈາກພາກວິຊາ;

4.3 ນັກສຶກສາທີ່ຂາດຮຽນໂດຍບໍ່ມີເຫດຜົນ ຕັ້ງແຕ່ **21-40%** ແມ່ນຈະບໍ່ມີດສິດສອບເສັງ ແລະ ຄະແນນວິຊານັ້ນຈະເທົ່າກັບ (F) ຕົກ;

ໃນກໍລະນີດັ່ງກ່າວນັກສຶກສາຕ້ອງໄດ້ລົງທະບຽນຍົກລະດັບວິຊານັ້ນຄືນໃໝ່ (Upgrade) ຕາມປະຕິທິນການຮຽນ-ການສອນ ໃນແຕ່ລະສົກສຶກສາ.

**ມາດຕາ 5. ການນຳໃຊ້ລະດັບ I ບໍ່ສົມບູນ (Using the 'I' grade) ປັບປຸງ:**

ນັກສຶກສາທີ່ໄດ້ຄ່າລະດັບ (I) ບໍ່ສົມບູນ ໝາຍເຖິງນັກສຶກສາທີ່ປະຕິບັດໜ້າວຽກ ແລະ ກິດຈະກຳຕ່າງໆ ບໍ່ທັນຄົບຕາມເງື່ອນໄຂທີ່ທາງອາຈານສອນກຳນົດໃຫ້ ຫຼື ນັກສຶກສາທີ່ຂາດຮຽນໂດຍບໍ່ມີເຫດຜົນ ຕັ້ງແຕ່ 41% ຂຶ້ນໄປຂອງເວລາຮຽນໃນແຕ່ລະວິຊາ;

ໃນກໍລະນີດັ່ງກ່າວນັກສຶກສາຕ້ອງໄດ້ລົງທະບຽນຮຽນວິຊານັ້ນຄືນໃໝ່ ແບບເຕັມເວລາ, ຕາມການຈັດຕັ້ງການຮຽນ-ການສອນຂອງພາກວິຊາ ແລະ ສຳລັບຄະແນນໃຫ້ປະຕິບັດຄືນັກສຶກສາທົ່ວໄປ.

**ມາດຕາ 6. ການນັບໜ່ວຍກິດ ແລະ ການຄິດໄລ່ລະດັບສະເລ່ຍ** (Counting Credits and calculating average levels)

6.1 ການນັບຈຳນວນໜ່ວຍກິດເພື່ອໃຊ້ໃນການຄິດໄລ່ຫາຕາມລະດັບສະເລ່ຍປະຈຳພາກຮຽນໃຫ້ນັບຈາກວິຊາທີ່ມີການປະເມີນຜົນການຮຽນເປັນຕາມລະດັບ A, B+, B, C+, C, D+, D ແລະ F ເທົ່ານັ້ນ;

6.2 ການນັບຈຳນວນໜ່ວຍກິດສະສົມ ເພື່ອໃຫ້ຄົບຕາມຈຳນວນທີ່ກຳນົດໄວ້ໃນຫຼັກສູດໃຫ້ນັບສະເພາະບັນດາໜ່ວຍກິດ ຂອງວິຊາທີ່ໄດ້ເສັງຜ່ານ (ໝາຍຄວາມວ່າໄດ້ລະດັບ A, B+, B, C+, C, D+, D);

6.3 ຄ່າລະດັບສະເລ່ຍປະຈຳພາກຮຽນຂຽນຫຍໍ້ດ້ວຍ ຄສພ (GPA) ໃຫ້ຄິດໄລ່ຈາກຜົນການຮຽນໃນພາກຮຽນນັ້ນ ໂດຍເອົາຜົນບວກຂອງຜົນຄູນລະຫວ່າງຈຳນວນໜ່ວຍກິດກັບຄ່າລະດັບຂອງແຕ່ລະວິຊາເປັນຕົວຕັ້ງ ແລ້ວຫານດ້ວຍຈຳນວນໜ່ວຍກິດລວມຂອງພາກຮຽນນັ້ນ;

6.4 ຄ່າລະດັບສະເລ່ຍສະສົມຂຽນຫຍໍ້ ຄສສ (CGPA) ໃຫ້ຄິດໄລ່ຈາກຜົນການຮຽນຂອງນັກສຶກສາຕັ້ງແຕ່ເລີ່ມເຂົ້າຮຽນ ຈົນເຖິງພາກຮຽນທີ່ກຳລັງຮຽນມາຄິດໄລ່ໂດຍ ເອົາຜົນບວກຂອງຜົນຄູນລະຫວ່າງຈຳນວນໜ່ວຍກິດກັບຄ່າລະດັບຂອງແຕ່ລະວິຊາເປັນຕົວຕັ້ງ ແລ້ວຫານດ້ວຍຈຳນວນໜ່ວຍກິດສະສົມທັງໝົດ (ລວມທັງຈຳນວນໜ່ວຍກິດທີ່ໄດ້ຮຽນຊ້ຳຄືນເພື່ອແກ້ F);

**ມາດຕາ 7. ເງື່ອນໄຂໃນການເຂົ້າສອບເສັງປະຈຳພາກຮຽນ** (Semester Examination Requirements) **ປັບປຸງ:**

7.1 ນັກສຶກສາຈະມີສິດເຂົ້າສອບເສັງພາກຮຽນໃນແຕ່ລະວິຊາຕ່າງໆ ກໍຕໍ່ເມື່ອຕົນເອງໄດ້ຂຶ້ນຮຽນວິຊາດັ່ງກ່າວຕ່ຳສຸດບໍ່ໃຫ້ຫຼຸດ **80%** ຂອງຊົ່ວໂມງຮຽນທັງໝົດ;

7.2 ໃນກໍລະນີທີ່ນັກສຶກສາບໍ່ສາມາດເຂົ້າສອບເສັງດ້ວຍເຫດຜົນທີ່ຈຳເປັນ ແລະ ພຽງພໍ ຈະຕ້ອງຍື່ນຄຳຮ້ອງຕໍ່ພາກວິຊາ ເພື່ອຂໍໃຫ້ພິຈາລະນາອະນຸຍາດໂອນການສອບເສັງຂອງຕົນ ໄປໄວ້ໃນບົ້ນສອບເສັງພິເສດ ຊຶ່ງການຈັດຕັ້ງການສອບເສັງປະເພດນີ້ຂຶ້ນກັບການພິຈາລະນາຂອງພາກວິຊາ ແຕ່ຕ້ອງໃຫ້ຢູ່ພາຍໃນກຳນົດຂອງປະຕິທິນການຮຽນ-ການສອນ ໃນແຕ່ລະສົກສຶກສາ;

7.3 ສະເພາະລະບຽບໃນການສອບເສັງປະຈຳພາກຮຽນນັ້ນໃຫ້ທຸກໆພາກວິຊາຖືເອົາຕາມລະບຽບຂອງສະຖາບັນພາສາຕ່າງປະເທດໂລໂກສກຳນົດອອກ.

**ມາດຕາ 8. ການຈັດຕັ້ງປະຕິບັດ** (Implementation) **ປັບປຸງ:**

ມອບໃຫ້ພະແນກຄຸ້ມຄອງວິຊາການ ສົມທົບກັບບັນດາພາກວິຊາຕ່າງໆ ຂອງສະຖາບັນພາສາຕ່າງປະເທດໂລໂກສ ກວດກາການປະຕິບັດຂໍ້ກຳນົດສະບັບນີ້ ແລ້ວລາຍງານໃຫ້ຄະນະນຳຂອງສະຖາບັນພາສາຕ່າງປະເທດໂລໂກສ ຮັບຊາບເປັນແຕ່ລະໄລຍະຢ່າງເໝາະສົມ;

**ມາດຕາ 9: ຜົນສັກສິດ** (Effectiveness)

ຂໍ້ກຳນົດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ, ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ທຸກໆຂໍ້ກຳນົດທີ່ມີເນື້ອໃນຂັດກັບຂໍ້ກຳນົດສະບັບນີ້ລ້ວນແຕ່ຖືກລົບລ້າງ

**ຜູ້ອຳນວຍການ**

LOGOS INSTITUTE OF FOREIGN LANGUAGE INDIVIDUAL ENTERPRISE

**ປອ. ຈິນຊຸນ ຈອງ**